ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 03 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 10.01.2019.

# ດຳລັດ

ວ່າດ້ວຍການຮັບຮອງເອົາບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ຂອງ ສປປ ລາວ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ໜັງສືສະເໜີຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 2994/ກຜທ.ລທ4, ລົງວັນທີ 29 ພະຈິກ 2018.

## ນາຍົກລັດຖະມົນຕີ ອອກດຳລັດ :

**ມາດຕາ 1** ຮັບຮອງເອົາບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ຂອງ ສປປ ລາວ ຕາມເອກະສານຄັດຕິດ “ກ” ຂອງດຳລັດສະບັບນີ້.

**ມາດຕາ 2** ບັນຊີກິດຈະການຄວບຄຸມ ແມ່ນບັນຊີປະເພດທຸລະກິດ ທີ່ມີຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ເພື່ອຮັບປະກັນການພັດທະນາບັນດາຂະແໜງເສດຖະກິດ ແລະ ສັງຄົມ ໃຫ້ມີການຂະຫຍາຍຕົວຢ່າງໝັ້ນທ່ຽງ ຊຶ່ງການລົງທຶນໃນບັນຊີກິດຈະການຄວບຄຸມ ຕ້ອງໄດ້ຜ່ານການພິຈາລະນາ ແລະ ມີຄຳເຫັນໂດຍບັນດາຂະແໜງການທີ່ກ່ຽວຂ້ອງ, ຫລັງຈາກນັ້ນ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ ເປັນຜູ້ຕົກລົງອະນຸຍາດການລົງທຶນ.

ສ່ວນບັນຊີກິດຈະການສຳປະທານ ແມ່ນບັນຊີປະເພດທຸລະກິດ ທີ່ຜູ້ລົງທຶນໄດ້ຮັບອະນຸຍາດ ໃນການສຳປະທານຈາກລັດ ເປັນຕົ້ນການສຳປະທານທີ່ດິນ, ການພັດທະນາເຂດເສດຖະກິດພິເສດ ແລະ ເຂດອຸດສາຫະກຳປຸງແຕ່ງ ເພື່ອສົ່ງອອກ, ການຂຸດຄົ້ນບໍ່ແຮ່, ການພັດທະນາແຫຼ່ງພະລັງງານ, ການສຳປະທານສາຍການບິນ ແລະ ໂທລະຄົມມະນາຄົມ.

**ມາດຕາ 3** ລັດສົ່ງເສີມໃຫ້ລົງທຶນເຂົ້າໃສ່ທຸກຂະແໜງການ, ກິດຈະການທີ່ກຳນົດໃນ ແລະ ນອກ ບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ຂອງ ສປປ ລາວ ໃນຂອບເຂດທົ່ວປະເທດ ຍົກເວັ້ນກິດຈະການ ແລະ ເຂດທີ່ແຕະຕ້ອງເຖິງຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງຊາດ, ມີຜົນສະທ້ອນອັນຮ້າຍແຮງຕໍ່ສິ່ງແວດລ້ອມ ໃນປັດຈຸບັນ ແລະ ຍາວນານ, ຕໍ່ສຸຂະພາບຂອງປະຊາຊົນ ແລະ ວັດທະນະທຳອັນດີງາມຂອງຊາດ, ລວມທັງບັນຊີປະເພດທຸລະກິດ ທີ່ເກືອດຫ້າມ.

ຂັ້ນຕອນຍື່ນຄຳຮ້ອງຂໍອະນຸຍາດລົງທຶນກິດຈະການໃນບັນຊີຄວບຄຸມ: ໃຫ້ຍື່ນຄຳຮ້ອງຂໍລົງທຶນຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ຫຼື ຂັ້ນແຂວງ ຕາມການແບ່ງຂັ້ນອະນຸມັດທີ່ກຳນົດໄວ້ໃນ

ເອກະສານຊ້ອນທ້າຍ "ກ" ຂອງດຳລັດສະບັບນີ້. ຫ້ອງການບໍລິການການລົງທຶນປະຕູດຽວ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຄົ້ນຄວ້າ ແລ້ວນຳສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາຕົກລົງ ຕາມການແບ່ງຂັ້ນຄຸ້ມຄອງ ພາຍໃນເວລາ **ຊາວຫ້າວັນ** ລັດຖະການ ນັບແຕ່ວັນຫ້ອງການບໍລິການການລົງທຶນປະຕູດຽວ ໄດ້ຮັບຄຳຮ້ອງຄົບຖ້ວນເປັນຕົ້ນໄປ. ຫຼັງຈາກໄດ້ຮັບໃບອະນຸຍາດລົງທຶນແລ້ວ ໃຫ້ວິສາຫະກິດສ່ວນບຸກຄົນ ຫຼື ນິຕິບຸກຄົນດັ່ງກ່າວ ສາມາດເຄື່ອນໄຫວການລົງທຶນຕາມກົດໝາຍ, ໃນກໍລະນີກິດຈະການລົງທຶນ ທີ່ມີກົດໝາຍ ຫລື ນິຕິກຳຂອງຂະແໜງການກຳນົດໃຫ້ມີໃບອະນຸຍາດສະເພາະ ກ່ອນການເປີດດຳເນີນທຸລະກິດ ບັນດາວິສາຫະກິດດັ່ງກ່າວ ຕ້ອງສະເໜີຂໍໃບອະນຸຍາດດັ່ງກ່າວ ຕາມນິຕິກຳທີ່ກຳນົດໄວ້.

ສ່ວນວິສາຫະກິດສ່ວນບຸກຄົນ ຫຼື ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບການຂຶ້ນທະບຽນສ້າງຕັ້ງວິສາຫະກິດ ຕາມກົດໝາຍ ວ່າດ້ວຍວິສາຫະກິດ ຂອງ ສປປ ລາວ ມາແລ້ວ ຫາກຢາກຂໍອະນຸຍາດລົງທຶນ ຫຼື ດຳເນີນທຸລະກິດໃໝ່ ຫຼື ເພີ່ມກິດຈະການ ໃນກິດຈະການຄວບຄຸມ ແມ່ນໃຫ້ຍື່ນຄຳຮ້ອງໂດຍກົງຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຕາມທີ່ກຳນົດໃນຂ້າງເທິງນີ້.

**ສຳລັບກິດຈະການການລົງທຶນສຳປະທານ:** ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນ ໃນກິດຈະການການລົງທຶນສຳປະທານ ຢູ່ ສປປ ລາວ ໃຫ້ຍື່ນຄຳຮ້ອງຂໍລົງທຶນ ຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ຫຼື ຂັ້ນແຂວງ ເພື່ອຄົ້ນຄວ້າ ແລະ ນຳສະເໜີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ (ດັ່ງທີ່ກຳນົດ ໃນເອກະສານຊ້ອນທ້າຍ "ກ" ຂອງດຳລັດສະບັບນີ້) ພິຈາລະນາ ພາຍໃນເວລາ **ຫົກສິບຫ້າ** ວັນລັດຖະການ ນັບແຕ່ວັນຫ້ອງການບໍລິການການລົງທຶນປະຕູດຽວ ໄດ້ຮັບຄຳຮ້ອງຄົບຖ້ວນເປັນຕົ້ນໄປ.

**ມາດຕາ 4** ໃຫ້ຂະແໜງການທີ່ກ່ຽວຂ້ອງ ປັບປຸງ ຫຼື ສ້າງນິຕິກຳ ກ່ຽວກັບຄວາມຕ້ອງການທາງດ້ານເອກະສານ ແລະ ຂັ້ນຕອນການພິຈາລະນາການອອກອະນຸຍາດລົງທຶນ ທີ່ກ່ຽວຂ້ອງກັບຂະແໜງການຂອງຕົນ ໃຫ້ລະອຽດ ຈະແຈ້ງ, ງ່າຍດາຍ ແລະ ສົ່ງໃຫ້ຫ້ອງການບໍລິການການລົງທຶນປະຕູດຽວ ເພື່ອແຈ້ງໃຫ້ນັກລົງທຶນ.

**ມາດຕາ 5** ບັນດາຂະແໜງການທີ່ກ່ຽວຂ້ອງ ສາມາດສະເໜີປັບປຸງ, ເພີ່ມ ຫຼື ຫຼຸດ ລາຍການປະເພດທຸລະກິດ ທີ່ຂະແໜງການຕົນຮັບຜິດຊອບ ໃນບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະທານ ຕາມຄວາມຈຳເປັນ ໂດຍສອດຄ່ອງກັບນະໂຍບາຍ ໃນແຕ່ລະໄລຍະ ຂອງຂະແໜງການກ່ຽວຂ້ອງ ໂດຍສະເໜີຜ່ານຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ ພິຈາລະນາ ແລະ ນຳສະເໜີລັດຖະບານ ຮັບຮອງ.

**ມາດຕາ 6** ໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງໃນການຈັດຕັ້ງປະຕິບັດ, ເຜີຍແຜ່, ແນະນຳ, ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 7** ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອຳນາດການປົກຄອງທ້ອງຖິ່ນ ທຸກຂັ້ນ ຈົ່ງພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 8** ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ, ບັນດາດຳລັດ, ຂໍ້ຕົກລົງ ແລະ ລະບຽບການຕ່າງໆກ່ອນໜ້ານີ້ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ

# ເອກະສານຄັດຕິດ "ວ [illegible] ບັນຊີກິດຈະການຄວບຄຸມ ແລະ ກິດຈະການສຳປະ[illegible]ມ ຂອງ ສປປ ລາວ

## ບັນຊີ 01: ບັນຊີກິດຈະການຄວບຄຸມ

| ລ/ດ ① | ເລກລະຫັດ ISIC ② | ປະເພດທຸລະກິດ ③ | ເງື່ອນໄຂການລົງທຶນ ④ | ການແບ່ງຂັ້ນຄຸ້ມຄອງ: ຂັ້ນສູນກາງ ⑤ | ການແບ່ງຂັ້ນຄຸ້ມຄອງ: ຂັ້ນແຂວງ ⑥ | ນິຕິກຳທີ່ກ່ຽວຂ້ອງ ⑦ | ພາກສ່ວນຮັບຜິດຊອບ ⑧ |
|---|---|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ (01 - 03) | | | | | | | |
| 1 | 011 | ການປູກພືດລົ້ມລຸກ | - ນຳໃຊ້ເນື້ອທີ່ດິນເອກະຊົນ ຫຼາຍກວ່າ 10 ເຮັກຕາ ຂຶ້ນໄປ;<br>- ປະຕິບັດຂໍ້ກຳນົດອື່ນ ຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | | ✓ | - ກົດໝາຍວ່າດ້ວຍ ກະສິກຳ ສະບັບເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998;<br>- ກົດໝາຍວ່າດ້ວຍ ທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003;<br>- ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການກະສິກຳ ແລະ ປ່າໄມ້;<br>- ຂະແໜງການກ່ຽວຂ້ອງອື່ນ. |
| 2 | 012 | ການປູກພືດໄມ້ຢືນຕົ້ນ | - ນຳໃຊ້ເນື້ອທີ່ດິນເອກະຊົນ ຫຼາຍກວ່າ 10 ເຮັກຕາ ຂຶ້ນໄປ;<br>- ປະຕິບັດຂໍ້ກຳນົດອື່ນ ຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | | ✓ | - ກົດໝາຍວ່າດ້ວຍ ກະສິກຳ ສະບັບເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998;<br>- ກົດໝາຍວ່າດ້ວຍ ທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003;<br>- ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການກະສິກຳ ແລະ ປ່າໄມ້;<br>- ຂະແໜງການກ່ຽວຂ້ອງອື່ນ. |
| 3 | 0162 | ກິດຈະກຳສະໜັບສະໜູນການລ້ຽງສັດ | - ຕ້ອງມີເນື້ອທີ່, ທຶນ, ສຳນັກງານ, ສິ່ງປຸກສ້າງ, ອຸປະກອນ, ເຄື່ອງມື ແລະ ພາຫະນະຮັບໃຊ້ ຢ່າງເໝາະສົມ;<br>- ຕ້ອງມີນັກວິຊາການ ທີ່ມີຄວາມຮູ້ດ້ານການລ້ຽງສັດ ລະດັບຊັ້ນກາງ ຂຶ້ນໄປ ຫຼື ວິຊາການສັດຕະວະແພດ ທີ່ມີໃບຢັ້ງຢືນໄດ້ຜ່ານການປະຕິບັດວຽກງານຕົວຈິງ ສຳລັບການລ້ຽງສັດ, ສ່ວນທຸລະກິດ ກ່ຽວກັບ ການສັດຕະວະແພດນັ້ນ ຕ້ອງໃຫ້ມີສັດຕະວະ | | ✓ | - ກົດໝາຍວ່າດ້ວຍ ການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;<br>- ກົດໝາຍວ່າດ້ວຍ ທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003;<br>- ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012; | - ຂະແໜງການກະສິກຳ ແລະ ປ່າໄມ້;<br>- ຂະແໜງການກ່ຽວຂ້ອງອື່ນ. |

| | | | | | | | |
|---|---|---|---|---|---|---|---|
| | | | ແພດ ຫຼື ປົວບານສັດ ທີ່ມີໃບຢັ້ງຢືນປະກອບວິຊາຊີບ ຈາກສະພາສັດຕະວະແພດ;<br>- ໄດ້ຮັບການເຫັນດີຈາກຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;<br>- ປະຕິບັດເງື່ອນໄຂອື່ນທີ່ຈຳເປັນ ຕາມອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດກຳນົດ. | | | - ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | |
| 4 | 0210 | ການປູກໄມ້ ແລະ ກິດຈະກຳປ່າໄມ້<br>*(ສຳລັບ ISIC ນີ້ ຄອບຄຸມສະເພາະແຕ່: ການປູກໄມ້ອຸດສາຫະກຳ (ຍົກເວັ້ນ ຢາງພາລາ) ແລະ ກິດຈະກຳ ກ່ຽວກັບປ່າໄມ້ ເຊັ່ນ: ກິດຈະກຳການທ່ອງທ່ຽວທຳມະຊາດ, ຟື້ນຟູປ່າໄມ້ເຂດຊຸດໂຊມ, ສ້າງສວນພຶກສາຊາດ, ກິດຈະກຳອະນຸລັກສັດນ້ຳ ສັດປ່າ ແລະ ພືດທີ່ຫາຍາກ ແລະ ໃກ້ຈະສູນພັນ ແລະ ການລົງທຶນດ້ານສິນເຊື່ອກາກບອນປ່າໄມ້)* | ອີງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | | ✓ | - ກົດໝາຍວ່າດ້ວຍ ປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;<br>- ກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;<br>- ກົດໝາຍວ່າດ້ວຍ ທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2013;<br>- ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;<br>- ແຈ້ງການ ກ່ຽວກັບການຄຸ້ມຄອງ ແລະ ສົ່ງອອກເຄື່ອງປ່າຂອງດົງ ແລະ ໄມ້ຜະລິດຕະພັນ ສະບັບເລກທີ 1355/ຫສນຍ. ກລຂ, ລົງວັນທີ 9 ກັນຍາ 2016;<br>- ບົດແນະນຳ ຂອງກົມປ່າໄມ້ ກ່ຽວກັບການສ້າງບົດວິພາກເສດຖະກິດ-ເຕັກນິກ ການລົງທຶນປູກໄມ້ອຸດສາຫະກຳ ແລະ ເຄື່ອງປ່າຂອງດົງ ສະບັບເລກທີ 1643/ກປມ, ລົງວັນທີ 14 ພຶດສະພາ 2010;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການກະສິກຳ ແລະ ປ່າໄມ້;<br>- ຂະແໜງການກ່ຽວຂ້ອງອື່ນ. |
| 5 | 0230 | ການປູກ ແລະ ເກັບກູ້ ເຄື່ອງປ່າຂອງດົງ ທີ່ປູກເພື່ອການຄ້າ (ໃນເຂດປ່າທີ່ປະຊາຊົນຄຸ້ມຄອງນຳໃຊ້) | ອີງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | | ✓ | - ກົດໝາຍວ່າດ້ວຍ ປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;<br>- ກົດໝາຍວ່າດ້ວຍ ທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2013;<br>- ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012; | - ຂະແໜງການກະສິກຳ ແລະ ປ່າໄມ້;<br>- ຂະແໜງການກ່ຽວຂ້ອງອື່ນ. |

| | | | | | | | |
|---|---|---|---|---|---|---|---|
| | | | | | | - ແຈ້ງການ ກ່ຽວກັບການຄຸ້ມຄອງ ແລະ ສົ່ງອອກເຄື່ອງປ່າຂອງດົງ ແລະ ໄມ້ຜະລິດຕະພັນ ສະບັບເລກທີ 1355/ທສນຍ. ກລຂ, ລົງວັນທີ 9 ກັນຍາ 2016;<br>- ບົດແນະນຳ ຂອງກົມປ່າໄມ້ ກ່ຽວກັບການສ້າງບົດວິພາກເສດຖະກິດ-ເຕັກນິກ ການລົງທຶນປູກໄມ້ອຸດສາຫະກຳ ແລະ ເຄື່ອງປ່າຂອງດົງ ສະບັບເລກທີ 1643/ກປມ, ລົງວັນທີ 14 ພຶດສະພາ 2010;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | |
| ການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ (05 - 09) | | | | | | | |
| 6 | 0810 | ກິດຈະການຂຸດຄົ້ນ, ສຳຫຼວດແຮ່ທາດ | - ຕ້ອງເປັນນິຕິບຸກຄົນ ພາຍໃນ ຫຼື ຕ່າງປະເທດ (ດຳເນີນພາຍໃຕ້ຮູບການບໍລິສັດເທົ່ານັ້ນ);<br>- ນິຕິບຸກຄົນໜຶ່ງ ສາມາດດຳເນີນການຂຸດຄົ້ນແຮ່ທາດໄດ້ 1 ຕອນ ມີເນື້ອທີ່ບໍ່ເກີນ 200 ກິໂລຕາແມັດ. | ✓ | | - ກົດໝາຍວ່າດ້ວຍ ແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017;<br>- ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການພະລັງງານ ແລະ ບໍ່ແຮ່;<br>- ຂະແໜງການກ່ຽວຂ້ອງອື່ນ. |
| 7 | 0990 | ການບໍລິການສະໜັບສະໜູນດ້ານແຮ່ທາດ *(ສຳລັບ ISIC ນີ້ ຄອບຄຸມສະເພາະແຕ່: ການບໍລິການໃຫ້ຄຳປຶກສາ ດ້ານແຮ່ທາດ, ຂຸດຄົ້ນ, ສຳຫຼວດຂຸດຄົ້ນ, ປຸງແຕ່ງ ແລະ ວິໄຈແຮ່ທາດ)* | ອີງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | ✓ | | - ກົດໝາຍວ່າດ້ວຍ ແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການພະລັງງານ ແລະ ບໍ່ແຮ່;<br>- ຂະແໜງການກ່ຽວຂ້ອງອື່ນ. |
| ອຸດສາຫະກຳປຸງແຕ່ງ (10 - 33) | | | | | | | |
| 8 | 1920 | ການຜະລິດຜະລິດຕະພັນນ້ຳມັນກັ່ນກອງ | ອີງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | ✓ | | - ກົດໝາຍວ່າດ້ວຍ ອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການອຸດສາຫະກຳ ແລະ ການຄ້າ;<br>- ຂະແໜງການພະລັງງານ ແລະ ບໍ່ແຮ່; |

| | | | | | | | |
|---|---|---|---|---|---|---|---|
| | | | | | | | - ຂະແໜງການກ່ຽວຂ້ອງອື່ນ. |
| 9 | 2029 | ການຜະລິດຜະລິດຕະພັນເຄມີອື່ນໆທີ່ບໍ່ທັນໄດ້ຈັດເຂົ້າບ່ອນໃດ<br>*(ສໍາລັບ ISIC ນີ້ ຄວບຄຸມສະເພາະແຕ່: ການແຍກ ຫຼື ຫຼອມແຮ່ທາດຫາຍາກ (Rare Earth) ທີ່ບໍ່ແມ່ນແຮ່ທາດກໍາມັນຕະພາບລັງສີ)* | ອີງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | ✓ | | - ກົດໝາຍວ່າດ້ວຍ ການຄຸ້ມຄອງເຄມີ ສະບັບເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016;<br>- ກົດໝາຍວ່າດ້ວຍ ອຸດສາຫະກໍາປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;<br>- ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການພະລັງງານ ແລະ ບໍ່ແຮ່;<br>- ຂະແໜງການກ່ຽວຂ້ອງອື່ນ. |
| 10 | 2100 | ການຜະລິດຢາປົວພະຍາດ, ຜະລິດຕະພັນເຄມີໃຊ້ປຸງແຕ່ງຢາ ແລະ ຜະລິດຕະພັນການຢາຈາກພືດ | - ຕ້ອງມີທຶນຈົດທະບຽນ 1 ຕື້ກີບ ຂຶ້ນໄປ;<br>- ອັດຕາສ່ວນການຖືຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ໃຫ້ເກີນ 49%. | ✓ | | - ກົດໝາຍວ່າດ້ວຍ ຢາ ແລະ ຜະລິດຕະພັນແພດ ສະບັບເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011;<br>- ກົດໝາຍວ່າດ້ວຍ ອຸດສາຫະກໍາປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;<br>- ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;<br>- ແຈ້ງການ ກ່ຽວກັບການຄຸ້ມຄອງອຸປະກອນການແພດ ສະບັບເລກທີ 310/ກຊສ, ລົງວັນທີ 20 ມີນາ 2013;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການສາທາລະນະສຸກ;<br>- ຂະແໜງການກ່ຽວຂ້ອງອື່ນ. |
| | | ການຜະລິດຜະລິດຕະພັນຢາສັດຕະວະແພດປະເພດຢາຫຼວງ | ອີງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | ✓ | | - ກົດໝາຍວ່າດ້ວຍ ການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;<br>- ກົດໝາຍວ່າດ້ວຍ ຢາ ແລະ ຜະລິດຕະພັນແພດ ສະບັບເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011;<br>- ກົດໝາຍວ່າດ້ວຍ ອຸດສາຫະກໍາປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;<br>- ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການກະສິກໍາ ແລະ ປ່າໄມ້;<br>- ຂະແໜງການກ່ຽວຂ້ອງອື່ນ. |

| | | | | | | | |
|---|---|---|---|---|---|---|---|
| 11 | 2394 | ການຜະລິດຊີມັງ, ປູນຂາວ ແລະ ປູນຕິດເຄືອບອື່ນໆ | ອີງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | ✓ | | - ກົດໝາຍວ່າດ້ວຍ ແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017;<br>- ກົດໝາຍວ່າດ້ວຍ ອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;<br>- ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການພະລັງງານ ແລະ ບໍ່ແຮ່;<br>- ຂະແໜງການກ່ຽວຂ້ອງອື່ນ. |
| ນ້ຳປະປາ, ລະບົບລະບາຍນ້ຳເປື້ອນ ແລະ ການຟື້ນຟູ (36 - 39) | | | | | | | |
| 12 | 3812 | ການເກັບມ້ຽນສິ່ງເສດເຫຼືອທີ່ເປັນອັນຕະລາຍ | ອີງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | ✓ | | - ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;<br>- ບົດແນະນຳ ກ່ຽວກັບການຄວບຄຸມມົນລະພິດ ສະບັບເລກທີ 0745/ກຊສ, ລົງວັນທີ 11 ກຸມພາ 2015;<br>- ບົດແນະນຳ ກ່ຽວກັບການຄຸ້ມຄອງສິ່ງເສດເຫຼືອ ທີ່ເປັນພິດ ແລະ ອັນຕະລາຍ ສະບັບເລກທີ 0744/ກຊສ, ລົງວັນທີ 11 ກຸມພາ 2015;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການໂຍທາທິການ ແລະ ຂົນສົ່ງ;<br>- ຂະແໜງການກ່ຽວຂ້ອງອື່ນ. |
| 13 | 3822 | ການບຳບັດ ແລະ ກຳຈັດສິ່ງເສດເຫຼືອ ທີ່ເປັນອັນຕະລາຍ | ອີງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | ✓ | | - ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;<br>- ບົດແນະນຳ ກ່ຽວກັບການຄວບຄຸມມົນລະພິດ ສະບັບເລກທີ 0745/ກຊສ, ລົງວັນທີ 11 ກຸມພາ 2015;<br>- ບົດແນະນຳ ກ່ຽວກັບການຄຸ້ມຄອງສິ່ງເສດເຫຼືອ ທີ່ເປັນພິດ ແລະ ອັນຕະລາຍ ສະບັບເລກທີ 0744/ກຊສ, ລົງວັນທີ 11 ກຸມພາ 2015;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການອຸດສາຫະກຳ ແລະ ການຄ້າ;<br>- ຂະແໜງການພະລັງງານ ແລະ ບໍ່ແຮ່;<br>- ຂະແໜງການກ່ຽວຂ້ອງອື່ນ. |
| 14 | 3830 | ການນຳເສດວັດສະດຸມາໃຊ້ຄືນ (ການຜະລິດຄືນໃໝ່ສິ່ງເສດເຫຼືອທຸກປະເພດ ເຊັ່ນ: ສິ່ງເສດເຫຼືອ | ອີງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | ✓ | | - ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການອຸດສາຫະກຳ |

| | | | | | | | |
|---|---|---|---|---|---|---|---|
| | | ເອເລັກໂຕນິກ, ເຄື່ອງໄຟຟ້າ, ໝໍ້ໄຟເກົ່າ, ປາສຕິກ ແລະ ສິ່ງເສດເຫຼືອອື່ນໆ) | | | | | ແລະ ການຄ້າ;<br>- ຂະແໜງການກ່ຽວຂ້ອງອື່ນ. |
| **ການຄ້າຂາຍຍົກ ແລະ ຂາຍຍ່ອຍ, ສ້ອມແປງລົດຍົນ ແລະ ລົດຈັກ (45 - 47)** | | | | | | | |
| 15 | 4662 | ການຂາຍຍົກ ໂລຫະ ແລະ ແຮ່ໂລຫະ<br>*(ສຳລັບ ISIC ນີ້ ຄວບຄຸມສະເພາະແຕ່: ທຸລະກິດນຳເຂົ້າ-ສົ່ງອອກຄຳ ທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ)* | - ຕ້ອງມີທຶນຈົດທະບຽນ 20 ຕື້ກີບຂຶ້ນໄປ, ໃນນັ້ນຕ້ອງເປັນເງິນສົດ 80%<br>- ປະຕິບັດຂໍ້ກຳນົດອື່ນ ຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | ✓ | | - ກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;<br>- ບົດແນະນຳ ກ່ຽວກັບການຄຸ້ມຄອງສິ່ງເສດເຫຼືອ ທີ່ເປັນພິດ ແລະ ອັນຕະລາຍ ສະບັບເລກທີ 0744/ກຊສ, ລົງວັນທີ 11 ກຸມພາ 2015;<br>- ລະບຽບການສ້າງຕັ້ງ ແລະ ຄຸ້ມຄອງບໍລິສັດນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ສະບັບເລກທີ 01/ທຫລ, ລົງວັນທີ 15 ພຶດສະພາ 2007;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ທະນາຄານແຫ່ງ ສປປ ລາວ;<br>- ຂະແໜງການກ່ຽວຂ້ອງອື່ນ. |
| **ການຂົນສົ່ງ ແລະ ສາງສິນຄ້າ (49 - 53)** | | | | | | | |
| 16 | 5110 | ການຂົນສົ່ງໂດຍສານທາງອາກາດ | ອີງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | ✓ | | - ກົດໝາຍວ່າດ້ວຍ ການບິນພົນລະເຮືອນ ສະບັບເລກທີ 53/ສພຊ, ລົງວັນທີ 26 ມິຖຸນາ 2018;<br>- ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການໂຍທາທິການ ແລະ ຂົນສົ່ງ;<br>- ຂະແໜງການກ່ຽວຂ້ອງອື່ນ. |
| 17 | 5120 | ການຂົນສົ່ງສິນຄ້າທາງອາກາດ | ອີງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ | ✓ | | - ກົດໝາຍວ່າດ້ວຍ ການບິນພົນລະເຮືອນ ສະບັບເລກທີ 53/ສພຊ, ລົງວັນທີ 26 ມິຖຸນາ 2018;<br>- ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການໂຍທາທິການ ແລະ ຂົນສົ່ງ;<br>- ຂະແໜງການກ່ຽວຂ້ອງອື່ນ. |

| | | | | | | | |
|---|---|---|---|---|---|---|---|
| 18 | 5320 | ການເຄື່ອນໄຫວດ້ານບໍລິການຈັດສົ່ງໄປສະນີ ແລະ ພັດສະດຸພັນ (Courier activities) | ອີງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ.<br>ກ) ສໍາລັບການບໍລິການຈັດສົ່ງໄປສະນີ ແລະ ພັດສະດຸພັນ ລະຫວ່າງປະເທດ. | ✓ | | - ຂໍ້ຕົກລົງວ່າດ້ວຍ ການອະນຸຍາດດໍາເນີນທຸລະກິດບໍລິການໄປສະນີ ສະບັບເລກທີ 2555/ປທສ, ລົງວັນທີ 29 ສິງຫາ 2016;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການໄປສະນີ ໂທລະຄົມມະນາຄົມ ແລະ ສື່ສານ;<br>- ຂະແໜງການກ່ຽວຂ້ອງອື່ນ. |
| | | | ຂ) ສໍາລັບການບໍລິການຈັດສົ່ງໄປສະນີ ແລະ ພັດສະດຸພັນ ພາຍໃນປະເທດ. | | ✓ | | |
| 19 | - | ສ້າງຕັ້ງສາຍການບິນ | ອີງຕາມລະບຽບການຂອງຂະແໜງການກ່ຽວຂ້ອງ | ✓ | | - ກົດໝາຍວ່າດ້ວຍ ການບິນພົນລະເຮືອນ ສະບັບເລກທີ 53/ສພຊ, ລົງວັນທີ 26 ມິຖຸນາ 2018;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການໂຍທາທິການ ແລະ ຂົນສົ່ງ;<br>- ຂະແໜງການກ່ຽວຂ້ອງອື່ນ. |
| **ການເຄື່ອນໄຫວ ດ້ານທີ່ພັກເຊົ່າ ແລະ ບໍລິການອາຫານ (55 - 56)** | | | | | | | |
| 20 | 5510 | ທຸລະກິດໂຮງແຮມ ແລະ ຣີສອດ ລະດັບ 4 ດາວ ຂຶ້ນໄປ | - ມີຖານະທາງດ້ານການເງິນ ຫຼື ແຫຼ່ງທຶນ ຊຶ່ງໄດ້ຮັບການຢັ້ງຢືນ ຈາກສະຖາບັນການເງິນພາຍໃນ ຫຼື ຕ່າງປະເທດ;<br>- ມີທຶນຈົດທະບຽນ ຕໍ່າສຸດບໍ່ຫຼຸດ 30% ຂອງທຶນທັງໝົດໃນໂຄງການດັ່ງກ່າວ. | ✓ | | - ກົດໝາຍວ່າດ້ວຍ ການທ່ອງທ່ຽວ ສະບັບເລກທີ 32/ສພຊ, ລົງວັນທີ 24 ກໍລະກົດ 2013;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການຖະແຫຼງຂ່າວ ວັດທະນາທໍາ ແລະ ທ່ອງທ່ຽວ;<br>- ຂະແໜງການກ່ຽວຂ້ອງອື່ນ. |
| **ຂໍ້ມູນຂ່າວສານ ແລະ ການຕິດຕໍ່ສື່ສານ (58 - 63)** | | | | | | | |
| 21 | 5811 | ການສ້າງຕັ້ງສໍານັກພິມ, ສື່ສິ່ງພິມຕ່າງໆ | - ບັນນາທິການ ຕ້ອງເປັນຄົນລາວ;<br>- ປະຕິບັດຂໍ້ກໍານົດອື່ນ ຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | ✓ | | - ກົດໝາຍວ່າດ້ວຍ ການພິມຈໍາໜ່າຍ ສະບັບເລກທີ 225/ສພຊ, ລົງວັນທີ 9 ທັນວາ 2008;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການຖະແຫຼງຂ່າວ ວັດທະນະທໍາ ແລະ ທ່ອງທ່ຽວ. |
| 22 | 5813 | ການສ້າງຕັ້ງອົງການສື່ມວນຊົນ ເຊັ່ນ: ສະຖານີວິທະຍຸ, ສະຖານີ ໂທລະພາບ, ໜັງສືພິມ ແລະ ວາລະສານ | - ອະນຸຍາດສະເພາະແຕ່ໃຫ້ຜູ້ລົງທຶນພາຍໃນ;<br>- ປະຕິບັດຂໍ້ກໍານົດອື່ນ ຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | ✓ | | - ກົດໝາຍວ່າດ້ວຍ ສື່ມວນຊົນ ສະບັບເລກທີ 01/ສພຊ, ລົງວັນທີ 4 ພະຈິກ 2016;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການຖະແຫຼງຂ່າວ ວັດທະນະທໍາ |

| | | | | | | | |
|---|---|---|---|---|---|---|---|
| | | | | | | | ແລະ ທ່ອງທ່ຽວ;<br>- ຂະແໜງການກ່ຽວຂ້ອງອື່ນ. |
| **ການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ (64 - 66)** | | | | | | | |
| 23 | 6419 | ການບໍລິການເປັນສື່ກາງດ້ານການເງິນ - ການບໍລິການດ້ານການທະນາຄານ<br>*(ສໍາລັບ ISIC ນີ້ ຄວບຄຸມສະເພາະແຕ່:*<br>*ກ) ການສ້າງຕັ້ງທະນາຄານທຸລະກິດ* | - ຕ້ອງມີທຶນຈົດທະບຽນ ຕໍ່າສຸດ 300 ຕື້ກີບ ຂຶ້ນໄປ;<br>- ສໍາລັບບຸກຄົນ ແລະ ນິຕິບຸກຄົນ ທີ່ຕ້ອງການສ້າງຕັ້ງທະນາຄານທຸລະກິດ ຕ້ອງມີ ໜຶ່ງ ຫຼື ຫຼາຍທະນາຄານທຸລະກິດ ຖືຮຸ້ນສ້າງຕັ້ງຫຼາຍກວ່າ 50% ຂອງທຶນທັງໝົດ, ສໍາລັບບຸກຄົນ ຜູ້ໜຶ່ງສາມາດຖືຮຸ້ນໄດ້ບໍ່ເກີນ 10%. | ✓ | | - ກົດໝາຍວ່າດ້ວຍ ທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;<br>- ຂໍ້ຕົກລົງວ່າດ້ວຍ ການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ ສະບັບເລກທີ 42/ທຫລ, ລົງວັນທີ 15 ມັງກອນ 2016;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ທະນາຄານແຫ່ງ ສປປ ລາວ;<br>- ຂະແໜງການກ່ຽວຂ້ອງອື່ນ. |
| | | *ຂ) ການສ້າງຕັ້ງ ສາຂາທະນາຄານທຸລະກິດຕ່າງປະເທດ* | - ຕ້ອງມີທຶນທັງໝົດ ຕໍ່າສຸດ 100 ຕື້ກີບ ຂຶ້ນໄປ;<br>- ປະຕິບັດຂໍ້ກໍານົດອື່ນ ຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | ✓ | | | |
| 24 | 6430 | ຄັງເງິນ, ກອງທຶນ ແລະ ກິຈັກການເງິນອື່ນໆ ທີ່ກ່ຽວຂ້ອງກັບການຈັດຕັ້ງກອງທຶນຮ່ວມ | - ຕ້ອງເປັນບໍລິສັດບໍລິຫານຊັບສິນ ທີ່ສ້າງຕັ້ງຢ່າງຖືກຕ້ອງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ຫຼັກຊັບ;<br>- ຜູ້ບໍລິຫານກອງທຶນຮ່ວມ ທີ່ມີໃບຢັ້ງຢືນນັກວິຊາຊີບ ປະເພດບໍລິຫານກອງທຶນຮ່ວມ ໃນຈໍານວນທີ່ເໝາະສົມ;<br>- ມີແຜນລະດົມທຶນ ແລະ ແຜນການລົງທຶນຂອງກອງທຶນຮ່ວມ. | ✓ | | - ກົດໝາຍວ່າດ້ວຍ ຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ທະນາຄານແຫ່ງ ສປປ ລາວ;<br>- ຂະແໜງການກ່ຽວຂ້ອງອື່ນ. |
| | | ການບໍລິຫານຕະຫຼາດການເງິນ | - ມີຖານະເປັນ ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຖານະການເງິນດີ, ມີປະສົບການສູງ ໃນການເຄື່ອນໄຫວວຽກງານຕະຫຼາດທຶນ;<br>- ມີທຶນຈົດທະບຽນຕາມການກໍານົດຂອງ ຄຄຊ;<br>- ມີແຜນການດໍາເນີນທຸລະກິດ 3 ປີທໍາອິດ ແລະ ໂຄງຮ່າງການຈັດຕັ້ງຂອງຕະຫຼາດຫຼັກຊັບ. | ✓ | | | |
| 25 | 649 | ກິດຈະກໍາບໍລິການດ້ານການເງິນອື່ນໆ ຍົກເວັ້ນການເຄື່ອນໄຫວປະກັນໄພ ແລະ ຄັງບໍານານ<br>*(ສໍາລັບ ISIC ນີ້ ຄວບຄຸມສະເພາະແຕ່:* | - ຕ່າງປະເທດ ຖືຮຸ້ນ ບໍ່ຫຼຸດ 10% ແລະ ບໍ່ເກີນ 30%; ມີທຶນຈົດທະບຽນ 3 ຕື້ກີບ ຂຶ້ນໄປ ແລະ ຖ້າເປັນການລົງທຶນ ຢູ່ໃນນະຄອນຫຼວງ ແມ່ນຂໍອະນຸມັດຈາກຂັ້ນສູນກາງ. | | ✓ | - ດໍາລັດວ່າດ້ວຍ ສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 3 ຕຸລາ 2012;<br>- ດໍາລັດວ່າດ້ວຍ ການເຊົ່າສິນເຊື່ອ ສະບັບເລກທີ 11/ | - ທະນາຄານແຫ່ງ ສປປ ລາວ;<br>- ຂະແໜງການ |

| | | | | | | | |
|---|---|---|---|---|---|---|---|
| | | *ກ) ສະຖາບັນການເງິນຈຸລະພາກຮັບຝາກ* | | | | ລບ, ລົງວັນທີ 18 ກຸມພາ 1999;<br>- ຄຳແນະນຳ ການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍ ສະຖາບັນການເງິນຈຸລະພາກ ສະບັບເລກທີ 01/ທຫລ, ລົງວັນທີ 19 ເມສາ 2016;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | ກ່ຽວຂ້ອງອື່ນ. |
| | | *ຂ) ສະຖາບັນການເງິນຈຸລະພາກບໍ່ຮັບຝາກ* | - ຕ່າງປະເທດ ຖືຮຸ້ນ ບໍ່ຫຼຸດ 10% ແລະ ບໍ່ເກີນ 30%; ມີທຶນຈົດທະບຽນ 200 ລ້ານກີບ ຂຶ້ນໄປ ແລະ ຖ້າເປັນການລົງທຶນຢູ່ໃນນະຄອນຫຼວງ ແມ່ນຂໍອະນຸມັດຈາກຂັ້ນສູນກາງ. | | ✓ | | |
| | | *ຄ) ທຸລະກິດເຊົ່າສິນເຊື່ອ* | - ຕ້ອງມີທຶນຈົດທະບຽນ 500 ລ້ານກີບ ຂຶ້ນໄປ;<br>- ຕ່າງປະເທດ ຖືຫຸ້ນໄດ້ 100%. | ✓ | | | |
| | | *ງ) ບໍລິສັດຄ້ຳປະກັນ* | - ອີງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | ✓ | | | |
| 26 | 651 | ການປະກັນໄພ | - ຕ້ອງມີທຶນຈົດທະບຽນ ຕ່ຳສຸດ 16 ຕື້ ກີບ;<br>- ຕ້ອງວາງເງິນຄ້ຳປະກັນ ຈຳນວນ 1/3 ຂອງທຶນຈົດທະບຽນໄວ້ຢູ່ທະນາຄານໃດໜຶ່ງ ທີ່ມີຄວາມໝັ້ນຄົງ ທາງດ້ານການເງິນທີ່ຕັ້ງຢູ່ ສປປ ລາວ;<br>- ອີງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. | ✓ | | - ກົດໝາຍວ່າດ້ວຍ ການປະກັນໄພ ສະບັບເລກທີ 06/ສພຊ, ລົງວັນທີ 21 ທັນວາ 2011;<br>- ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການປະກັນໄພ ສະບັບເລກທີ 539/ກງ, ລົງວັນທີ 19 ກຸມພາ 2014;<br>- ຄຳແນະນຳ ກ່ຽວກັບການອອກໃບອະນຸຍາດດຳເນີນທຸລະກິດປະກັນໄພ ສະບັບເລກທີ 770/ກງ, ລົງວັນທີ 21 ມີນາ 2016;<br>- ຂໍ້ຕົກລົງວ່າດ້ວຍ ລະບຽບການບໍລິຫານຄຸ້ມຄອງ ແລະ ການດຳເນີນທຸລະກິດປະກັນໄພ ສະບັບເລກທີ 3058/ກງ, ລົງວັນທີ 27 ກັນຍາ 2018;<br>- ຂໍ້ຕົກລົງວ່າດ້ວຍ ລະບຽບການລາຍງານຂໍ້ມູນຂອງບໍລິສັດປະກັນໄພ ແລະ ນາຍໜ້າປະກັນໄພ ສະບັບເລກທີ 3060/ກງ, ລົງວັນທີ 27 ກັນຍາ 2018;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການການເງິນ;<br>- ຂະແໜງການກ່ຽວຂ້ອງອື່ນ. |
| 27 | 6612 | ການເປັນນາຍໜ້າຊື້-ຂາຍຫຼັກຊັບທີ່ກ່ຽວຂ້ອງກັບການໃຫ້ບໍລິການເປັນນາຍໜ້າໃນຕະຫຼາດທຶນ *(ສຳລັບ ISIC ນີ້ ຄວບຄຸມສະເພາະແຕ່:* | - ສ້າງຕັ້ງເປັນບໍລິສັດຫຼັກຊັບ;<br>- ມີຄູ່ຮ່ວມທຶນ ກັບທະນາຄານທຸລະກິດພາຍໃນ ແລະ ຕ້ອງຖືຮຸ້ນຮ່ວມກັນ ຢ່າງໜ້ອຍ 30% ຂຶ້ນໄປ; | ✓ | | - ກົດໝາຍວ່າດ້ວຍ ຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;<br>- ລະບຽບວ່າດ້ວຍ ການສ້າງຕັ້ງ ແລະ ການເຄື່ອນໄຫວ | - ທະນາຄານແຫ່ງ ສປປ ລາວ;<br>- ຂະແໜງການ |

| | | | | | | | |
|---|---|---|---|---|---|---|---|
| | | *ກ) ການໃຫ້ບໍລິການເປັນຜູ້ຄໍ້າປະກັນ ອອກຈຳໜ່າຍ ຫຼັກຊັບ ພ້ອມທັງໃຫ້ບໍລິການເປັນນາຍໜ້າຊື້-ຂາຍ ຫຼັກຊັບ ແລະ ທີ່ປຶກສາທາງການ.* | - ມີທຶນຈົດທະບຽນ 100 ຕື້ກີບ ຂຶ້ນໄປ;<br>- ມີແຜນການດຳເນີນທຸລະກິດ ຢ່າງໜ້ອຍ 3 ປີທຳອິດ;<br>- ມີສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ ທີ່ມີຄວາມສາມາດ ແລະ ປະສົບການດ້ານທຸລະກິດຫຼັກຊັບ, ການເງິນ-ການທະນາຄານ ຫຼື ກົດໝາຍ ຢ່າງໜ້ອຍ 5 ປີ;<br>- ມີເງື່ອນໄຂອື່ນ ຕາມກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການສະເພາະ. | | | ຂອງບໍລິສັດຫຼັກຊັບ ສະບັບເລກທີ 002/ຄຄຊ, ລົງວັນທີ 24 ກໍລະກົດ 2013;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | ກ່ຽວຂ້ອງອື່ນ. |
| | | *ຂ) ການໃຫ້ບໍລິການເປັນນາຍໜ້າຊື້-ຂາຍຫຼັກຊັບ ພ້ອມທັງເປັນທີ່ປຶກສາ ກ່ຽວກັບວຽກງານຫຼັກຊັບ.* | - ສ້າງຕັ້ງເປັນບໍລິສັດຫຼັກຊັບ;<br>- ມີຄູ່ຮ່ວມທຶນ ກັບທະນາຄານທຸລະກິດພາຍໃນ ແລະ ຕ້ອງຖືຮຸ້ນຮ່ວມກັນ ຢ່າງໜ້ອຍ 30% ຂຶ້ນໄປ;<br>- ມີທຶນຈົດທະບຽນ 30 ຕື້ກີບ ຂຶ້ນໄປ;<br>- ມີແຜນການດຳເນີນທຸລະກິດ ຢ່າງໜ້ອຍ 3 ປີທຳອິດ;<br>- ມີສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ ທີ່ມີຄວາມສາມາດ ແລະ ປະສົບການດ້ານທຸລະກິດຫຼັກຊັບ, ການເງິນ-ການທະນາຄານ ຫຼື ກົດໝາຍ ຢ່າງໜ້ອຍ 5 ປີ;<br>- ປະຕິບັດເງື່ອນໄຂອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບ ການສະເພາະ. | ✓ | | | |
| 28 | 6619 | ກິດຈະກຳທີ່ຊ່ວຍໜູນກິດຈະກຳທາງດ້ານການເງິນ *(ສຳລັບ ISIC ນີ້ ຄວບຄຸມສະເພາະແຕ່:*<br>*ກ) ຜູ້ໃຊ້ບໍລິການຂອງລະບົບການໂອນເງິນແບບທັນທີ.* | - ການເປັນຜູ້ໃຊ້ບໍລິການ ຂອງລະບົບການໂອນເງິນແບບທັນທີ ຕ້ອງແມ່ນທະນາຄານທຸລະກິດ, ສະຖາບັນການເງິນ, ອົງການຈັດຕັ້ງລັດ ແລະ ນິຕິບຸກຄົນ ທີ່ມີທີ່ຕັ້ງຢູ່ ສປປ ລາວ (ມີພຽງແຕ່ທະນາຄານ ແຫ່ງ ສປປ ລາວ ສາມາດລົງທຶນ ໄດ້ໃນລະບົບການໂອນເງິນ ແບບທັນທີ). | ✓ | | - ກົດໝາຍວ່າດ້ວຍ ຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;<br>- ກົດໝາຍວ່າດ້ວຍ ລະບົບການຊຳລະ ສະບັບເລກທີ 32/ສພຊ, ລົງວັນທີ 7 ພະຈິກ 2017;<br>- ຂໍ້ຕົກລົງວ່າດ້ວຍ ການໂອນເງິນ ແບບທັນທີ ສະບັບເລກທີ 531/ທຫລ, ລົງວັນທີ 4 ກໍລະກົດ 2016;<br>- ລະບຽບການວ່າດ້ວຍ ການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງບໍລິສັດຫຼັກຊັບ ສະບັບເລກທີ 002/ຄຄຊ, ລົງວັນທີ 24 ກໍລະກົດ 2013;<br>- ຂໍ້ຕົກລົງວ່າດ້ວຍ ຕົວແທນຜູ້ຖືຮຸ້ນກູ້ ສະບັບເລກທີ 17/ຄຄຊ, ລົງວັນທີ 3 ກັນຍາ 2018; | - ທະນາຄານ ແຫ່ງ ສປປ ລາວ;<br>- ຂະແໜງການກ່ຽວຂ້ອງອື່ນ. |
| | | *ຂ) ການໃຫ້ບໍລິການຊຳລະ.* | - ທະນາຄານ ແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງລະບົບການ ຊຳລະແບບທັນທີ ແລະ ລະບົບການຊຳລະການຊື້-ຂາຍ ພັນທະບັດລັດຖະບານ ແລະ ພັນທະບັດທະນາຄານ ແຫ່ງ ສປປ ລາວ;<br>- ທະນາຄານທຸລະກິດ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດ ຈາກທະນາຄານ ແຫ່ງ ສປປ ລາວ ເປັນຜູ້ຄວບຄຸມ ລະບົບການຊຳລະຕາມທຸລະກິດຍ່ອຍ. | ✓ | | | |

| | | | | | | | |
|---|---|---|---|---|---|---|---|
| | | ຄ) *ການເປັນທີ່ປຶກສາທາງດ້ານການເງິນ ໃນ ຂົງເຂດວຽກງານຫຼັກຊັບ.* | - ສ້າງຕັ້ງ ບໍລິສັດຫຼັກຊັບ ໂດຍມີຜູ້ຮ່ວມທຶນເປັນ ບຸກຄົນ ຫຼື ນິຕິບຸກຄົນພາຍໃນ ແລະ ຕ້ອງຖືຮຸ້ນຮ່ວມກັນ ຢ່າງໜ້ອຍ 10% ຂຶ້ນໄປ;<br>- ຜູ້ລົງທຶນສ້າງຕັ້ງບໍລິສັດຫຼັກຊັບ ຈາກຕ່າງປະເທດ ຕ້ອງເປັນ ບໍລິສັດຫຼັກຊັບເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດຈາກ ສຄຄຊ ປະເທດຂອງຕົນ;<br>- ມີທຶນຈົດທະບຽນ 5 ຕື້ກີບ ຂຶ້ນໄປ;<br>- ປະຕິບັດເງື່ອນໄຂອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ຫຼັກຊັບ ແລະ ລະບຽບການສະເພາະ. | ✓ | | - ລະບຽບການວ່າດ້ວຍ ທະນາຄານດູແລຊັບສິນ ສະບັບ ເລກທີ 010/ຄຄຊ, ລົງວັນທີ 7 ພຶດສະພາ 2014;<br>- ລະບຽບການວ່າດ້ວຍ ການຮັບຮອງບໍລິສັດຈັດລຳດັບ ຄວາມໜ້າເຊື່ອຖື ຈາກຕ່າງປະເທດ ສະບັບເລກທີ 002/ ຄຄຊ, ລົງວັນທີ 8 ທັນວາ 2015;<br>- ລະບຽບການວ່າດ້ວຍ ການຮັບຮອງບໍລິສັດປະເມີນ ມູນຄ່າຊັບສິນ ສະບັບເລກທີ 003/ ຄຄຊ, ລົງວັນທີ 8 ທັນວາ 2015;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | |
| | | ງ) *ການໃຫ້ບໍລິການດູແລຊັບສິນ.* | - ທະນາຄານທຸລະກິດຕ່າງປະເທດ;<br>- ມີສະພາບຄ່ອງທາງດ້ານການເງິນດີ ແລະ ເປັນທີ່ຍອມຮັບ ຂອງຜູ້ລົງທຶນ;<br>- ມີລະບົບເຕັກໂນໂລຊີ ຂໍ້ມູນ-ຂ່າວສານ ເຊື່ອມໂຍງກັບພາກ ສ່ວນກ່ຽວຂ້ອງ ແລະ ສາມາດຮັບປະກັນຄວາມປອດໄພສູງ;<br>- ປະຕິບັດເງື່ອນໄຂອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ຫຼັກຊັບ ແລະ ລະບຽບການສະເພາະ. | ✓ | | | |
| | | ຈ) *ການໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື* | - ເປັນບໍລິສັດຈັດລຳດັບຄວາມໜ້າເຊື່ອຖືສາກົນ ຫຼື ເປັນບໍລິສັດ ຈັດລຳດັບຄວາມໜ້າເຊື່ອຖື ທີ່ນອນຢູ່ໃນບັນຊີລາຍຊື່ຂອງປະເທດ ທີ່ອົງການຄຸ້ມຄອງວຽກງານ ຫຼັກຊັບເປັນສະມາຊິກ ຂອງອົງການ ຄຸ້ມຄອງວຽກງານສາກົນ (IOSCO) ຫຼື ຂອງປະເທດທີ່ມີສາຍ ພົວພັນຮ່ວມມື ໂດຍເຊັນບົດບັນທຶກຄວາມເຂົ້າໃຈກັບ ສຄຄຊ;<br>- ມີຊື່ສຽງ ແລະ ປະສົບການ ຈັດລຳດັບຄວາມໜ້າເຊື່ອຖື;<br>- ມີຜູ້ຮັບຜິດຊອບຈັດລຳດັບຄວາມໜ້າເຊື່ອຖື ທີ່ໄດ້ຮັບໃບຢັ້ງ ຢືນການຜ່ານຫຼັກສູດດ້ານວິຊາຊີບການເງິນ ແລະ ການລົງທຶນ ລະດັບສາກົນ (CFA), ໃບຢັ້ງຢືນວິຊາຊີບ ຈັດລຳດັບຄວາມ ໜ້າເຊື່ອຖື, ໃບຮັບຮອງເປັນຜູ້ຮັບຜິດຊອບຈັດລຳດັບຄວາມໜ້າ ເຊື່ອຖື ຈາກ ສຄຄຊ ຕ່າງປະເທດ;<br>- ປະຕິບັດເງື່ອນໄຂອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ຫຼັກຊັບ ແລະ ລະບຽບການສະເພາະ. | ✓ | | | |

| | | | | | | | |
|---|---|---|---|---|---|---|---|
| | | *ສ) ການໃຫ້ບໍລິການເປັນຕົວແທນຜູ້ຖືຮຸ້ນກູ້* | - ເປັນທະ[illegible]ການທຸລະກິດ ແລະ ບໍລິສັດຫຼັກຊັບ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວ ຢ່າງຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;<br>- ມີລະບົບການຄຸ້ມຄອງບໍລິຫານພາຍໃນ ທີ່ຮັບປະກັນໃຫ້ແກ່ການເຄື່ອນໄຫວເປັນຕົວແທນຜູ້ຖືຮຸ້ນກູ້;<br>- ມີພະນັກງານ ທີ່ມີປະສົບການດ້ານວຽກງານການເງິນ-ການທະນາຄານ ຫຼື ວຽກງານຫຼັກຊັບ ແລະ ອື່ນໆທີ່ຈຳເປັນ;<br>- ປະຕິບັດເງື່ອນໄຂອື່ນ ຕາມລະບຽບການຂອງ ສຄຄຊ. | ✓ | | | |
| | | *ຊ) ການໃຫ້ປະເມີນມູນຄ່າຊັບສິນ.* | - ເປັນບໍລິສັດປະເມີນມູນຄ່າຊັບສິນຕ່າງປະເທດ ທີ່ນອນຢູ່ໃນບັນຊີລາຍຊື່ຂອງປະເທດ ທີ່ອົງການຄຸ້ມຄອງວຽກງານຫຼັກຊັບເປັນສະມາຊິກອົງການຄຸ້ມຄອງວຽກງານສາກົນ (IOSCO) ຫຼື ຂອງປະເທດທີ່ມີສາຍພົວພັນຮ່ວມມື ໂດຍເຊັນບົດບັນທຶກຄວາມເຂົ້າໃຈຮ່ວມກັບ ສຄຄຊ;<br>- ມີທຶນຈົດທະບຽນ ຕ່ຳສຸດ 500 ລ້ານກີບ;<br>- ມີຊື່ສຽງ ແລະ ປະສົບການໃນການປະເມີນມູນຄ່າຊັບສິນ;<br>- ມີຜູ້ປະເມີນ ຢ່າງໜ້ອຍ 2 ຄົນ ທີ່ມີໃບຢັ້ງຢືນຜ່ານ ຫຼັກສູດການປະເມີນມູນຄ່າຊັບສິນ ຫຼື ໃບຢັ້ງຢືນຜູ້ປະເມີນມູນຄ່າຊັບສິນ;<br>- ປະຕິບັດເງື່ອນໄຂອື່ນ ຕາມທີ່ກຳນົດໃນລະບຽບການສະເພາະ. | ✓ | | | |
| 29 | - | ກິດຈະການສະໜັບສະໜູນຫວຍພັດທະນາ | - ຕ້ອງມີທຶນພຽງພໍ, ສຳນັກງານຫ້ອງການ, ອຸປະກອນເຄື່ອງທີ່ຈຳເປັນຮັບໃຊ້ວຽກງານການເຄື່ອນໄຫວຈຳໜ່າຍຫວຍ, ພາຫະນະຮັບໃຊ້ຢ່າງເໝາະສົມ ແລະ ມີພະນັກງານບັນຊີ, ພະນັກງານໄອທີປະຈຳ;<br>- ຕ້ອງເປັນຄົນລາວ, ສັນຊາດລາວໂດຍກຳເນີດ, ອາຍຸບໍ່ເກີນ 60 ປີ ແລະ ມີຄວາມສາມາດປະກອບກິດຈະການດ້ວຍຕົນເອງ;<br>- ໄດ້ຮັບການເຫັນດີຈາກອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;<br>- ຕ້ອງປະກອບເອກະສານຢັ້ງຢືນໃຫ້ຄົບຖ້ວນ ດັ່ງນີ້: ໃບຢັ້ງຢືນກວດສຸຂະພາບຈາກໂຮງໝໍຂອງລັດ ບໍ່ເກີນ 3 ເດືອນ; ໃບຊີວະປະຫວັດ; ໃບຢັ້ງຢືນທີ່ຢູ່; ໃບຮັບປະກັນ; ໃບແຈ້ງໂທດຈາກສານເບີ 3; ວຸດທິການສຶກສາຈົບ ລະດັບມັດທະຍົມຕອນປາຍ | ✓ | | - ກົດໝາຍວ່າດ້ວຍ ວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;<br>- ກົດໝາຍວ່າດ້ວຍ ແຮງງານ ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013;<br>- ກົດໝາຍວ່າດ້ວຍ ສ່ວຍສາອາກອນ ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015;<br>- ຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງກິດຈະການຫວຍ ສະບັບເລກທີ 70/ນຍ, ລົງວັນທີ 1 ກໍລະກົດ 2008;<br>- ຄຳສັ່ງ ກ່ຽວກັບການຄຸ້ມຄອງກິດຈະການຫວຍ ສະບັບ ເລກທີ 1332/ກງ, ລົງວັນທີ 17 ມິຖຸນາ 2009;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການການເງິນ;<br>- ຂະແໜງການກ່ຽວຂ້ອງອື່ນ. |

| | | | | | | | |
|---|---|---|---|---|---|---|---|
| | | | ຂຶ້ນໄປ [illegible] ໃບຢັ້ງຢືນວິຊາສະເພາະດ້ານການຕະຫຼາດ, ການເງິນ-ບັນຊີ, ບໍລິຫານທຸລະກິດ (ຊັ້ນສູງ) ຂຶ້ນໄປ; ບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການດໍາເນີນທຸລະກິດແຕ່ລະໄລຍະ; ບັນຊີສໍາຮອງ (ເງິນຝາກທະນາຄານທີ່ເຄື່ອນໄຫວປົກກະຕິ 3 ເດືອນ ກ່ອນການຍື່ນເອກະສານ); ໃບທະບຽນວິສາຫະກິດ (ຖ້າມີ);<br>- ປະຕິບັດຕາມເງື່ອນໄຂ ແລະ ມາດຖານອື່ນ ທີ່ກະຊວງການເງິນ ແລະ ບໍລິສັດລັດວິສາຫະກິດ ວາງອອກ. | | | | |
| **ການເຄື່ອນໄຫວດ້ານສາຍວິຊາຊີບ, ວິທະຍາສາດ ແລະ ເຕັກນິກ (69 - 75)** | | | | | | | |
| 30 | 6910 | ການເຄື່ອນໄຫວດ້ານນິຕິກໍາ<br>*(ສໍາລັບ ISIC ນີ້ ຄວບຄຸມສະເພາະແຕ່: ການສ້າງຕັ້ງວິສາຫະກິດກົດໝາຍ)* | - ຜູ້ລົງທຶນຕ້ອງແມ່ນທະນາຍຄວາມ ຫຼື ມີທະນາຍຄວາມເປັນຂາຮຸ້ນຫຼືຜູ້ຖືຮຸ້ນ;<br>- ທຶນຈົດທະບຽນ ຢ່າງໜ້ອຍ 10 ລ້ານກີບຂຶ້ນໄປ. | ✓ | | - ກົດໝາຍວ່າດ້ວຍ ທະນາຍຄວາມ ສະບັບເລກທີ 06/ສພຊ, ລົງວັນທີ 9 ພະຈິກ 2016;<br>- ຂໍ້ຕົກລົງວ່າດ້ວຍ ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການທີ່ປຶກສາກົດໝາຍ ສະບັບເລກທີ 178/ກຍ, ລົງວັນທີ 18 ກັນຍາ 2007;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການຍຸຕິທໍາ;<br>- ຂະແໜງການກ່ຽວຂ້ອງອື່ນ. |
| 31 | 6920 | ເຄື່ອນໄຫວດ້ານການບັນຊີ, ການສະຫຼຸບສັງລວມ ແລະ ກວດສອບ; ປຶກສາດ້ານພາສີ-ອາກອນ<br>*(ສໍາລັບ ISIC ນີ້ ຄວບຄຸມສະເພາະແຕ່:*<br>*ກ) ການບັນຊີ* | - ຕ້ອງເປັນນັກຊ່ຽວຊານບັນຊີ;<br>- ຕ້ອງເປັນສະມາຊິກ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;<br>- ບໍ່ເປັນລັດຖະກອນ, ບໍ່ເປັນເຈົ້າຂອງ, ບໍ່ເປັນຂາຮຸ້ນ ຫຼື ພະນັກງານຂອງວິສາຫະກິດໃດໜຶ່ງ;<br>- ບໍ່ເຄີຍລົງວິໄນ ຫຼື ຖືກສານຕັດສິນລົງໂທດໃນຖານະສໍ້ໂກງ ຫຼື ກ່ຽວກັບການກະທໍາຜິດດ້ານການເງິນ, ການບັນຊີ;<br>- ຕ້ອງມີພະນັກງານວິຊາການ ດ້ານການບັນຊີ, ການເງິນ ລະດັບຊັ້ນສູງຂຶ້ນໄປ ຢ່າງໜ້ອຍ 3 ຄົນ. | ✓ | | - ກົດໝາຍວ່າດ້ວຍ ການບັນຊີ ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013;<br>- ກົດໝາຍວ່າດ້ວຍ ການກວດສອບອິດສະລະ ສະບັບເລກທີ 51/ສພຊ, ລົງວັນທີ 22 ກໍລະກົດ 2014;<br>- ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. | - ຂະແໜງການການເງິນ;<br>- ຂະແໜງການກ່ຽວຂ້ອງອື່ນ. |
| | | *ຂ) ການກວດສອບ* | - ຕ້ອງເປັນນັກຊ່ຽວຊານບັນຊີ ຫຼື ວິສາຫະກິດກວດສອບຕ່າງປະເທດ;<br>- ຕ້ອງເປັນສະມາຊິກ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ; | ✓ | | | |